ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ສູນສະຖິຕິແຫ່ງຊາດ

ຫ້ອງການ

ເລກທີ: 2084 ຫກ.1.3

ວັນທີ 23 ກັນຍາ 2024

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

**ເຖິງ: ບໍລິສັດ, ຫ້າງຮ້ານ ແລະ ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງ.**

1. ສູນສະຖິຕິແຫ່ງຊາດ ຂໍເຊີນບັນດາບໍລິສັດ ຫ້າງຮ້ານ ແລະ ວິສາຫະກິດສ່ວນບຸກຄົນ ເພື່ອດຳເນີນການສົມທຽບລາຄາ ການສ້ອມແປງຕຶກອາຄານ 04 ຊັ້ນ ຂອງສູນສະຖິຕິແຫ່ງຊາດ, ໂດຍນຳໃຊ້ງົບປະມານລົງທຶນຂອງລັດ, ໄລຍະເວລ 2 ປີ ດັ່ງນັ້ນ, ຈິ່ງແຈ້ງເຊີນມາຍັງບໍລິສັດ ຫ້າງຮ້ານ, ວິສາຫະກິດທຸກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມການປະມູນ ເຊິ່ງມີລາຍລະອຽດໜ້າວຽກດັ່ງລຸ່ມນີ້:
   - **1.1** ປັບປຸງຫລັງຄາຈຸດບ່ອນກະເບື້ອງແຕກ ແລະ ຊຳລຸດ
   - **1.2** ປັບປຸງລະບົບຮາງລິນ
   - **1.3** ປັບປຸງສ້ອມແປງລະບົບຫ້ອງນ້ຳຍິງ-ຊາຍຊັ້ນ1 ຫາ ຊັ້ນ4
   - **1.4** ປູກະໂລ້ຄືນໃນຈຸດທີ່ຊຸ້ ແລະ ແຕກຫັກ
   - **1.5** ເທພື້ນເປຕົ່ງທາງເຂົ້າຕຶກດ້ານໜ້າ
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນ ການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄຳແນະນຳເພີ່ມເຕີມສຳລັບມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 1995/ກງ, ລົງວັນທທີ 24 ມິຖຸນາ 2019.
3. ບໍລິສັດ ຫຼື ຫ້າງຮ້ານສົນໃຈ ເຊີນຕິດຕໍ່ເອົາຊື້ຊອງປະມູນ ໄດ້ທີ່ ຫ້ອງການ ສູນສະຖິຕິແຫ່ງຊາດ, ນັບແຕ່ວັນທີ **24 ກັນຍາ 2024 ເຖິງ ວັນທີ 29 ຕຸລາ 2024** ຕາມເວລາໂມງລັດຖະການ.
4. ຊອງສະເໜີລາຄາຈະຕ້ອງສົ່ງກ່ອນ ເວລາ **10:00** ໂມງ ຂອງ ວັນທີ **30 ຕຸລາ 2024** ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ **10:00** ໂມງ ຂອງມື້ດຽວກັນ, ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຜູ້ທີ່ຍື່ນຊອງຕາງໜ້າບໍລິສັດທີ່ສົນໃຈຢາກເຂົ້າຮ່ວມ ທີ່ຫ້ອງປະຊຸມຊັ້ນ **3** ເບີ **311** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ສະຖານທີ່ບ້ານດົງນາໂຊກເໜືອ ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ໂທ/ແຟັກ: **(+021 214740 ) ຫຼື 020 22000615, 020 56007873** ເຊິ່ງລາຍລະອຽດແມ່ນຄັດຕິດມາພ້ອມນີ້.

**ຫົວໜ້າຫ້ອງການ**

ສູນສະຖິຕິແຫ່ງຊາດ ຫ້ອງການ

**ພອງສະມຸດ ດ້າວມະນີວົງ**

สแกนด้วย CamScanner